# 7 ເກມ ການໃຊ້ມືນບອກເລກ

**1. ຫົວຂໍ້** - ເຕັກນິກການບວກ ( ປ.2 ບົດທີ 18 ເຕັກນິກການບວກ )

**2. ຈຸດປະສົງ** - ນັກຮຽນປະຖົມສາມາດເຂົ້າໃຈກ່ຽວກັບຄວາມມ່ວນຂອງຈຳນວນ ໂດຍຫຼິ້ນ "ເກມ ການໃຊ້ມືນບອກເລກ" ໄດ້.

**3. ອຸປະກອນ** - ສໍຂາວ

**4. ວິທີຫຼິ້ນ**

(1) ຂຽນຈຳນວນມີຈຳນວນ 3 ຕົວເລກໃສ່ກະດານ.

(2) ເວົ້າວ່າ "ຖ້າຂ້ອຍຂຽນທັງໝົດ, ອາດຈະຖືກສົງໃສ." ແລ້ວ, ໃຫ້ໝູ່ຂຽນຈຳນວນມີຈຳນວນ 3 ຕົວເລກໃສ່ກະດານ.

(3) ເບິ່ງຈຳນວນທີ່ໝູ່ໄດ້ຂຽນແລ້ວ, ຈະຂຽນຈຳນວນເພື່ອເປັນ 9 .

(4) ໃຫ້ຂຽນຈຳນວນມີຈຳນວນ 3 ຕົວເລກອີກ.

(5) ຂຽນຈຳນວນຄືກັບ (3) (ເພື່ອເປັນ 9 ).

(6) ຕີກະດານ "ກົກກົກ" ແລ້ວ, ຂຽນຄຳຕອບໄວໆ.

ໝູ່ໄດ້ຂຽນ 2 ເທື່ອ, ສະນັ້ນ ລົບ 2 ຈາກຈຳນວນໜຶ່ງທີ່ຂຽນເທິງສຸດ. ຂຽນຈຳນວນອື່ນເທົ່າກັບຈຳນວນເທິງສຸດ. ຈຳນວນພັນແມ່ນເທົ່າກັບຈຳນວນຖ້ຽວທີ່ໝູ່ຂຽນ.

*ຕົວຢ່າງ*

$$
\begin{array}{r l}
324 & \leftarrow (1) \\
678 & \leftarrow (2) \\
321 & \leftarrow (3) \\
236 & \leftarrow (4) \\
+\ 763 & \leftarrow (5) \\
\hline
2322 & \leftarrow (6)
\end{array}
$$

**5. ໝາຍເຫດ**

★ ຖ້າໝູ່ຂຽນ "999", ຕໍ່ໄປ ໃຫ້ລາວຂຽນອີກ.

★ ໃຫ້ເດັກນ້ອຍ ຜູ້ບໍ່ມີຄວາມເຊື່ອຖືໃນຕົວເອງຂອງຄິດໄລ່ເລກ ເຮັດເກມນີ້, ລາວຈະຮູ້ສຶກມ່ວນ ແລະ ກາຍເປັນມີຄວາມເຊື່ອຖືໃນຕົວເອງຂອງຄິດໄລ່ເລກໄດ້.